ໂຄງການເຝິກອົບຮົມນັກສື່ມວນຊົນ




www.newsmekong.org 2011

ອິນເຕີແພຣສເຊີວິສ ອາຊີ-ປາຊີຟິກ (IPS) ແລະ ອົງການ ໂພຣບມີເດຍຟາວເດຊັນ (PMFI) ຂໍເຊື້ອເຊີນນັກຂ່າວ ຫນັງສືພິມ, ນັກຖ່າຍຮູບ ແລະ ນັກຂ່າວໂທລະພາບ ສະຫມັກໃນໂຄງການເຝິກອົບຮົມສື່ມວນຊົນ ທີ່ມີຊື່ວ່າ **'ສະເຫນີພາບແມ່ນ້ຳຂອງ'**. ໂຄງການ ໄດ້ເນັ້ນຫນັກໃສ່ ວິໃສທັດຂອງພາກພື້ນແມ່ນ້ຳຂອງໃນຍຸກໂລກາພິວັດ ໂດຍສະເພາະ ແມ່ນສຸມໃສ່ປະເດັນຂ້າມຜ່ານ ຍ້ອນຜົນກະທົບຈາກການພັດທະນາ.

ໂຄງການສະເຫນີພາບແມ່ນ້ຳຂອງ ແມ່ນເປີດໂອກາດໃຫ້ ນັກຂ່າວຈາກ ປະເທດ ກຳປູເຈຍ, ລາວ, ໄທ, ວຽດນາມ ແລະ ຈີນ. ໂຄງການ ໃນປີ 2011-12 ນີ້ ແມ່ນມີ 15 ທຶນ ເຊິ່ງໃນນີ້ມີ ນັກຂ່າວສື່ພິມ ຈຳນວນ 5 ຄົນ, ນັກຖ່າຍຮູບຈຳນວນ 2 ຄົນ ແລະ ນັກຂ່າວ ໂທລະພາບຈຳນວນ 8 ຄົນ, ທັງຍິງ ແລະ ຊາຍ ທີ່ມີປະສົບການເຮັດວຽກດ້ານສື່ຢ່າງຫນ້ອຍສາມປີ ຈະຖືກຄັດເລືອກ.

ໂຄງການ ສະເຫນີພາບແມ່ນ້ຳຂອງ (www.newsmekong.org) ແມ່ນປະສານງານໂດຍ ອົງການອິນເຕີແພຣສເຊີວິສ ອາຊີ-ປາຊີຟິກ IPS Asia-Pacific ແລະ ອົງການ ໂພຣບມີເດຍຟາວເດຊັນ PMFI, ແລະ ໄດ້ຮັບທຶນສະຫນັບສະຫນູນໂດຍ ມູນນິທິ ລອັກກີເຟວເລີ (ອາຊີຕາເວັນອອກສຽງໃຕ້), ທີ່ ນະຄອນຫລວງບາງກອກ, ປະເທດໄທ.

ໂຄງການດັ່ງກ່າວ ສຸກຍູ້ ການວິເຄາະປະເດັນຂ້າມຜ່ານ ທີ່ມີຜົນຕໍ່ການພັດທະນາຂອງ ຊຸມຊົນ ແລະ ປະເທດ ລ່ອງແມ່ນ້ຳຂອງ ໂດຍການນຳໃຊ້ ສື່ມວນຊົນໃນຂົງເຂດ ທີ່ບໍ່ໄດ້ພຽງແຕ່ລາຍງານຂ່າວແບບດັ່ງເດີມ ທີ່ສຸມໃສ່ສະເພາະ ຂົງເຂດການເມືອງ ແລະ ລະດັບປະເທດ.

ໃບສະຫມັກເຂົ້າຮ່ວມໂຄງການ ຄວນຕ້ອງແນໃສ່ ປະເດັນຂ້າມຜ່ານຊາຍແດນ ໃນຫົວຂໍ້ໃດຫນຶ່ງ (ທີ່ພົວພັນເຖິງສອງປະເທດໃນພາກພື້ນ). ບົດສະຫນິນແຜນວຽກ ຫລື ໃບສະຫມັກ ທີ່ຈະຖືກພິຈາລະນາເປັນພິເສດນັ້ນ ຄວນປະກອບມີຫລາກຫລາຍຂໍ້ມູນ, ນຳສະເຫນີ ຄຳເວົ້າ ແລະ ເລື່ອງລາວ ຈາກຫລາຍພາກສ່ວນ ແລະ ຊຸມຊົນທີ່ແຕກຕ່າງກັນ ຮວມມີ ກຸ່ມຄົນ ທີ່ຢູ່ຫ່າງໄກສອກຫລີກ.

ຜູ້ທີ່ຖືກຄັດເລືອກ ຈະມີພື້ນທີ່ສ້າງສັນ ໃນການຂຽນບົດເລື່ອງ, ຖ່າຍພາບ ແລະ ຜະລິດສາລະຄະດີ ໃນຫົວຂໍ້ຕ່າງໆ ເຊິ່ງປະກອບມີ ການພົວພັນຕ່າງປະເທດ, ສຸຂະພາບ, ບົດບາດຍິງຊາຍ, ວັດທະນະທຳ ແລະ ຊົນເຜົ່າ, ເສດຖະກິດ ແລະ ສະພາບແວດລ້ອມ ແລະ ປະເດັນເຊື່ອມໂຍງທາງດ້ານເສດຖະກິດ.

ຂັ້ນຕອນຂອງໂຄງການປະກອບມີ:

-ການຄັດເລືອກຜູ້ສະຫມັກ (ແບບຟອມສະຫມັກ ແລະ ແບບຟອມແຜນວຽກ ເປັນ ພາສາອັງກິດ ແລະ ພາສາຂອງປະເທດແມ່ນ້ຳຂອງ ທາງ www.newsmekong.org);
-ການສຳພາດ, ການຄົ້ນຫາຂໍ້ມູນແບບເຈາະເລິກ ແລະ ສືບສວນ ຕໍ່ກັບບົດຂອງຜູ້ເຂົ້າຮ່ວມ ທີ່ໄດ້ຮັບການເຫັນດີ ແລະ ຜູ້ໄດ້ເຂົ້າຮ່ວມຈະໄດ້ເດີນທາງ ເຮັດບົດຂ່າວ ໃນປະເທດຂອງຕົນ ແລະ ປະເທດອື່ນໃນພາກພື້ນ. ຜູ້ສະຫມັກທີ່ໄດ້ຖືກຄັດເລືອກ ຈະໄດ້ຮັບທຶນ ສຳລັບການ ໃຊ້ຈ່າຍ ໃນການເຮັດວຽກສື່ດັ່ງກ່າວ.
-ການຂຽນບົດ ແລະ ການຜະລິດ, ພາຍໃນໄລຍະເວລາ 4 ເດືອນ;

ຕັ້ງແຕ່ເລີ່ມຕົ້ນ ຈົນ ຈົບໂຄງການ, ຜູ້ຮັບທຶນ ຈະໄດ້ເຂົ້າຮ່ວມ 2 ຊຸດເຝິກອົບຮົມ ໃນພາກ ພື້ນ-ການສຳມະນາພາກເປີດ (ໃນວັນທີ 16-19 ເດືອນພະຈິກ, 2011 ແລະ ການສຳມະນາ ພາກປິດ (ໃນເດືອນ ກຸມພາ ປີ 2012) ເຊິ່ງເປັນເວທີ ໃຫ້ແກ່ຜູ້ເຂົ້າຮ່ວມ ໄດ້ສະເຫນີ ແລະ ສົນທະນາ ກ່ຽວກັບວຽກທີ່ພວກເຂົາໄດ້ຜະລິດສຳເລັດມາ. ສຳລັບນັກຂ່າວໂທລະພາບ, ສຳມະ ນາພາກເປີດ ແມ່ນຈະສືບຕໍ່ ເຝິກອົບຮົມອີກ ເປັນໄລຍະເວລາ 3 ວັນ (ວັນທີ 20-23 ເດືອນ ພະຈິກ 2011) ກ່ຽວກັບການຜະລິດສາລະຄະດີ ແລະ ການຜະລິດລາຍການ ໂທລະພາບ.

ຜົນຄາດຫວັງ

**ສຳລັບນັກຂ່າວສື່ພິມ/ນັກຖ່າຍຮູບ:** ນັກຂ່າວສື່ພິມ ຈະໄດ້ຂຽນບົດເລື່ອງ ຢ່າງຫນ້ອຍ 3000 ຄຳ, ເພື່ອຈະໄດ້ຖືກ ຕີພິມໃນສື່ຂອງພວກເຂົາ. ນັກຖ່າຍຮູບ ແມ່ນຕ້ອງໄດ້ຜະລິດ ບົດເລື່ອງປະກອບຮູບພາບ ໂດຍປະກອບມີ 15 ຮູບຄຸນະພາບ ທີ່ຖືກຄັດເລືອກຈາກຮູບ ທີ່ພວກເຂົາຖ່າຍມາ ແລະ ຂຽນບົດ 900 ຄຳ.

**ສຳລັບນັກຂ່າວໂທລະພາບ:** ນັກຂ່າວໂທລະພາບຈະໄດ້ຜະລິດ ສາລະຄະດີ ທີ່ມີຄວາມ ຍາວ ຢ່າງຫນ້ອຍ 8 ນາທີ ເພື່ອອອກອາກາດ ໃນສະຖານີຂອງພວກເຂົາ, ພວກເຂົາອາດ ຈະເຮັດວຽກ ຄົນດຽວ ຫລື ເປັນຄູ່ ເພື່ອໃຫ້ຜະລິດໄດ້ຫນຶ່ງເລື່ອງ. **ສາລະຄະດີ ຄວນຈະມີຫນັງສືແລ່ນຂຶ້ນເປັນພາສາອັງກິດ.**

ໃບສະຫມັກ ແລະ ເອກະສານຕິດຄັດຕ່າງໆ ສາມາດຂຽນເປັນພາສາຂອງຕົນເອງໄດ້. ພື້ນຖານຄວາມຮູ້ພາສາອັງກິດ ແມ່ນຈຳເປັນໃນການເຝິກອົບຮົມ ແຕ່ຈະມີພາສາແປໃຫ້ພ້ອມ.

## ລາຍການທີ່ຜູ້ສະຫມັກຕ້ອງສົ່ງ

ຜູ້ສະຫມັກຕ້ອງສົ່ງເອກະສານດັ່ງລຸ່ມນີ້:
-ແບບຟອມສະຫມັກໂຄງການ ສະເຫນີພາບແມ່ນ້ຳຂອງ 2011-12
- ແບບຟອມແຜນວຽກ

-ຕິດຄັດຜົນງານ ບົດຂ່າວ ຫລື ບົດເລື່ອງ ທີ່ມີຊື່ຜູ້ຂຽນ ຈຳນວນ 3 ບົດ ທີ່ຖືກຕີພິມ (ສຳລັບນັກຂ່າວສື່ພິມ), ຜົນງານຖ່າຍພາບທີ່ໄດ້ຮັບການຕີພິມແລ້ວ 8 ພາບ (ສຳລັບນັກຖ່າຍພາບ)
-ຢ່າງໜ້ອຍ ຕົວຢ່າງຜົນງານ ທີ່ໄດ້ຖືກຂຽນ, ກຳກັບ, ຖ່າຍທຳ ແລະ ຕັດຕໍ່ ສຳເລັດແລ້ວ ແລະ ໄດ້ອອກອາກາດທາງໂທລະພາບ 2 ຕອນ , ແລະ ເອົາຜົນງານດັ່ງກ່າວສົ່ງຂຶ້ນ ທາງ You Tube ຫລື Vimeo ຫລື ອີເມວ (ສຳລັບນັກຂ່າວໂທລະພາບ)

| ປິດຮັບສະໝັກ ໃນວັນທີ: 14 ເດືອນຕຸລາ ປີ 2011 |
|---|

**ກະລຸນາສົ່ງແບບຟອມ ແລະ ເອກະສານຕ່າງໆ ໂດຍຜ່ານທາງໄປສະນີ ແລະ ອີເມວ ໄປທີ່:**

The Regional Director
Imaging Our Mekong c/o IPS Asia-Pacific
Room 3/6 K Building, 22 Sukhumvit Soi 35,
Wattana 10120 Bangkok, Thailand
Tel: (66-2) 261 8330 Fax: (66-2) 261 8331
Email: **imagingourmekong@mac.com**

***ທ່ານສາມາດ ດາວໂຫລດ ແບບຟອມ ແລະ ແບບຟອມແຜນວຽກ ໃນພາສາຕ່າງໆ ຂອງ ປະເທດລຸ່ມແມ່ນ້ຳຂອງ ຈາກ www.newsmekong.org.***

IPS ອາຊີ-ປາຊີຟິກ (www.ipsnewsasia.net) ແມ່ນອົງການບໍ່ຫວັງຜົນກຳໄລ, ເປັນສ່ວນໜຶ່ງຂອງ ເຄືອຂ່າຍ IPS ສາກົນ ທີ່ສຸມໃສ່ຜະລິດຂ່າວທີ່ຈຳເປັນຕໍ່ປະເທດໃນຂົງເຂດອາຊີ ແລະ ຈັດຊຸດເຝິກອົບຮົມ ແລະ ພັດທະນາ ດ້ານສື່.
ອົງການ PMFI (www.probefound.com) ເປັນອົງການຊ່ວຍເຫລືອລ້າ ແລະ ບໍ່ຫວັງຜົນກຳໄລ ທີ່ມີຄວາມຕັ້ງໃຈປັບປຸງຄຸນນະພາບຂອງສື່ ແລະ ໂທລະພາບ ໂດຍຜ່ານ ການເຝິກອົບຮົມນັກສື່ມວນຊົນໃຫ້ປະສົບຜົນສຳເລັດ ແລະ ເປັນມືອາຊີບ.
ໂຄງການສະເໜີພາບແມ່ນ້ຳຂອງແມ່ນໄດ້ຮັບ ການສະໜັບສະໜູນໂດຍມູນນິທິ ROCKEFELLER FOUNDATION.